

# ສຳເລັດກອງປະຊຸມ ຄຄຊ ຄັ້ງທີ III ປະຈຳປີ 2021




ໃນຕອນເຊົ້າຂອງວັນທີ 10 ພະຈິກ 2021 ນີ້, ຄະນະກຳມະການຄຸ້ມຄອງຫຼັກຊັບ(ຄຄຊ) ໄດ້ຈັດກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ III ປະຈຳປີ 2021 ຂຶ້ນ ຢູ່ທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ), ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເປັນປະທານຂອງ ທ່ານ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ປະທານ ຄຄຊ ເຊິ່ງມີຮອງປະທານ, ຄະນະກຳມະການ, ຄະນະກົມ, ພະແນກ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ການຈັດກອງປະຊຸມໃນຄັ້ງນີ້, ແມ່ນໄດ້ດຳເນີນໄປເປັນເວລາເຄິ່ງວັນ ໃນຮູບແບບລະບົບອອນລາຍ ເພື່ອຮັບປະກັນການປະຕິບັດມາດຕະການປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ຕາມທີ່ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ 19 ວາງອອກ.

ໃນທີ່ປະຊຸມບັນດາຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານ ແລະ ປຶກສາຫາລືບາງບັນຫາທີ່ສຳຄັນ ກ່ຽວກັບລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມ ຄຄຊ ຄັ້ງທີ II ປີ 2021, ລາຍງານສະຫຼຸບການເຄື່ອນໄຫວວຽກງານຂອງ ສຄຄຊ ປະຈຳ 9 ເດືອນ 2021, ຄາດຄະເນການປະຕິບັດໝົດປີ 2021 ແລະ ທິດທາງແຜນການປີ 2022 ແລະ ລາຍ

ງານສະຫຼຸບສະພາບການເຄື່ອນໄຫວຂອງ ຕະຫຼາດຫຼັກຊັບລາວ ປະຈຳ 9 ເດືອນ ປີ 2021 ແລະ ທິດທາງແຜນການ 3 ເດືອນ ທ້າຍປີ 2021.




ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ປະທານ ຄຄຊ ໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ນັບແຕ່ກອງປະຊຸມ ຄຄຊ ຄັ້ງທີ II ປະຈຳປີ 2021 ທາງຄຄຊ ກໍ່ຄື ສຄຄຊ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຄຸ້ມຄອງຫຼັກຊັບຢ່າງຕັ້ງໜ້າ ໃນນັ້ນ, ຜົນສຳເລັດອັນພົ້ນເດັ່ນແມ່ນ ໄດ້ສຳເລັດການຮ່າງຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 (ສະບັບປັບປຸງ) ເພື່ອຂໍການຮັບຮອງຈາກກອງປະຊຸມລັດຖະບານ ພ້ອມທັງສຳເລັດການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ຈຳນວນໜຶ່ງ. ແຕ່ຢ່າງໃດກໍ່ຕາມ, ພວກເຮົາຍັງຕ້ອງໄດ້ສືບຕໍ່ເອົາໃຈໃສ່ຫຼາຍບັນຫາເພື່ອພັດທະນາຕະຫຼາດທຶນລາວໃຫ້ມີປະສິດທິພາບ, ມີຄວາມໜ້າເຊື່ອຖື ແລະ ມີຄວາມຄຶກຄື້ນກວ່າເກົ່າ.

*# ຂ່າວ-ພາບ: ສົມອົກ ເຄນຄຳແພງ*

## *ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດ ຄ່າເງິນລາວ*